# ລາຍລະອຽດຂອງໜ້າວຽກ ແລະ ເງື່ອນໄຂໃນການສະໝັກ :

**<u>ຊື່ຕໍາແໜ່ງ</u>** : ຈັດຊື້

- ❖ ໜ້າທີ່ຮັບຜິດຊອບຫຼັກ ToR :
  - ວາງແຜນ ແລະ ດໍາເນີນການຈັດຊື້ຕາມຄວາມຕ້ອງການຂອງບໍລິສັດ;
  - ຄວບຄຸມຕົ້ນທຶນການຈັດຊື້ໃຫ້ເປັນໄປຕາມງົບປະມານ;
  - ການສະເໜີ ແລະ ປະສານງານລາຄາສິນຄ້າຕ່າງໆກັບແຕ່ລະຝ່າຍທີ່ກ່ຽວຂ້ອງ;
  - ຈັດເອກະສານໃບຈັດຊື້ ແລະ ໃບສັ່ງຊື້ຕ່າງໆ ໃຫ້ກັບພະແນກທີ່ກ່ຽວຂ້ອງ;
  - ຕິດຕາມການຈັດສົ່ງສິນຄ້າທີ່ສັ່ງໃຫ້ຕົງຕາມເວລາ ແລະ ແກ້ໄຂບັນຫາຖ້າເກີດຄວາມລ່າຊ້າ;
  - ປຽບທຽບລາຍການສິນຄ້າ ນໍາເຂົ້າ ແລະ ລາຍການສົ່ງອອກ;
  - ກວດ ແລະ ກະທົບລາຍການສິນຄ້າໃນສະຕ໋ອກ;
  - ສ້າງບົດສະຫຼຸບ , ສ້າງບົດລາຍງານງົບປະມານໃນການຈັດຊື້ ແລະ ວິເຄາະການຈັດຊື້ລ່ວງໜ້າ;
  - ສົ່ງບົດລາຍງານ ແລະ ຂໍ້ມູນທຸລະກໍາຕ່າງໆໃຫ້ຫົວຫນ້າສາຍງານຕາມກໍາໜົດເວລາຢ່າງເຄັ່ງຄັດ;
  - ປະຕິບັດໜ້າທີ່ອື່ນໆ ຕາມມອບໝາຍຂອງຫົວໜ້າສາຍງານ.
- ❖ ວຸດທິການສຶກສາ
  - ບໍ່ຈໍາກັດວຸດການສຶກສາ
  - ການເງິນ , ການບັນຊີ , ການທະນາຄານ , (ພິຈາລະນາເປັນພິເສດ);
  - ເສດຖະສາດ-ບໍລິຫານທຸລະກິດ ຫຼື ສາຂາອື່ນທີ່ກ່ຽວຂ້ອງ (ພິຈາລະນາເປັນພິເສດ).
  - ມີປະສົບການດ້ານນີ້ໂດຍຕົງ (ພິຈາລະນາເປັນພິເສດ);
- ❖ ກ່ຽວກັບຜູ້ສະໝັກ
  - ມີທັກສະໃນການປະສານງານກັບ ພາກສ່ວນພາຍໃນ ແລະ ພາຍນອກ ໄດ້ເປັນຢ່າງດີ;
  - ມີຄວາມຮູ້ ແລະ ເຂົ້າໃຈເສື້ອຜ້າເຄື່ອງແຕ່ງກາຍ ໂດຍສະເພາະ ເຄື່ອງແຕ່ງກາຍຜູ້ຍິງ ໄດ້ເປັນຢ່າງດີ;
  - ມີພື້ນຖານ ແລະ ເຂົ້າໃຈພຶດຕິກໍາຂອງລູກຄ້າຕໍ່ການບໍລິໂພກ ແລະ ອຸປະໂພກ;
  - ມີຄວາມຮູ້, ຄວາມສາມາດ ໃນການໃຊ້ຄອມພິວເຕີ, ການນໍາໃຊ້ MS Office ໃນລະດັບດີ;
  - ເປັນຄົນທີ່ບໍ່ເຄີຍກໍ່ຄະດີອາຍາ ແລະ ບໍ່ເຄີຍຖືກຕັດອິດສະລະພາບມາກ່ອນ;
  - ສາມາດເຮັດວຽກກັບເພື່ອນຮ່ວມງານຫຼາຍຄົນໄດ້, ມີຄວາມອົດທົນສູງ, ມີຄວາມລະອຽດໃນໜ້າວຽກທີ່ໄດ້ຮັບມອບໝາຍ, ສາມາດເຮັດວຽກເປັນທີມ, ມີຄວາມຊື່ສັດ ແລະ ຍຶດໝັ້ນໃນໜ້າທີ່.